ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
-----===000===-----

ເລກທີ: 237 -
ນະຄອນຫຼວງວຽງຈັນ, ວັນທີ: 02 MAR 2020

ຮຽນ : ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
: ທ່ານ ຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ
: ທ່ານ ຜູ້ຖືຮຸ້ນ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ທີ່ນັບຖື

ເລື່ອງ : ແຈ້ງມະຕິຂອງກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018

- ອີງຕາມ ຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 004/ຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມ ລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008 / ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ພກພ) ຂໍຖືເປັນກຽດແຈ້ງມະຕິຂອງກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018 ທີ່ໄດ້ຈັດຂຶ້ນ ໃນວັນທີ 28 ກຸມພາ 2020 ເວລາ 14:30 ໂມງ ຫາ 15:30 ໂມງ ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 8, ອາຄານຕະຫຼາດຫຼັກຊັບລາວ, ຖະໜົນ T4, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ ໂດຍການເປັນປະທານຂອງ ທ່ານ ສິທາ ພິມມະຈິດ, ສະມາຊິກສະພາບໍລິຫານ/ຜູ້ອຳນວຍການໃຫຍ່.

ກອງປະຊຸມຄັ້ງນີ້ ມີຜູ້ເຂົ້າຮ່ວມທັງໝົດ 160 ທ່ານ ໃນນັ້ນ ຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງ ຈຳນວນ 13 ທ່ານ ແລະ ຜູ້ຖືຮຸ້ນທີ່ມອບສິດໃຫ້ຜູ້ຕ່າງໜ້າເຂົ້າຮ່ວມປະຊຸມແທນ ຈຳນວນ 147 ທ່ານ, ເຊິ່ງຖືຮຸ້ນລວມກັນທັງໝົດ 572.648.000 ຮຸ້ນ, ເທົ່າກັບ 98,39% ຂອງຈຳນວນຮຸ້ນທັງໝົດຂອງບໍລິສັດ ເຊິ່ງຖືວ່າຄົບອົງປະຊຸມ ຕາມກົດໝາຍ ແລະ ລະບຽບຂອງບໍລິສັດ. ກອງປະຊຸມໄດ້ພິຈາລະນາ ແລະ ມີມະຕິດັ່ງນີ້:

ວາລະທີ 01. ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີຜ່ານມາ ເພື່ອຊາບ
(ບໍ່ມີການລົງຄະແນນສຽງ)

ວາລະທີ 02. ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2017
ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີ ດັ່ງນີ້:

- ເຫັນດີ: ຈຳນວນ 572.624.000 ສຽງ ເທົ່າກັບ 100% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ຊັ້ນ 3, ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ, ສປປ ລາວ. Tel/Fax: (856-21) 265 394; E-mail: info@pcdlao.com; website: www.pcdlao.com

ວາລະທີ່ 03: **ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນງານຂອງບໍລິສັດ ປະຈຳປີ 2018 ແລະ ເອກະສານລາຍງານການເງິນທີ່ຜ່ານການກວດສອບແລ້ວຂອງບໍລິສັດ ປະຈຳປີ 2018**

ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີ ດັ່ງນີ້:

- ເຫັນດີ: ຈຳນວນ 572.624.000 ສຽງ ເທົ່າກັບ 100% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ່ 04: **ພິຈາລະນາການບໍ່ຈ່າຍເງິນປັນຜົນ ປະຈຳປີ 2018 ເນື່ອງມາຈາກບໍລິສັດຂາດທຶນຈາກການດຳເນີນງານ**

ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີ ດັ່ງນີ້:

- ເຫັນດີ: ຈຳນວນ 572.647.800 ສຽງ ເທົ່າກັບ 99,99997% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ;
- ບໍ່ເຫັນດີ: ຈຳນວນ 200 ສຽງ ເທົ່າກັບ 0,00003% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ

ວາລະທີ 05: **ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ2019**

ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີ ດັ່ງນີ້:

- ເຫັນດີ: ຈຳນວນ 572.648.000 ສຽງ ເທົ່າກັບ 100% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 06: **ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູ້ກວດສອບພາຍນອກປະຈຳປີ 2019**

ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີ ດັ່ງນີ້:

- ເຫັນດີ: ຈຳນວນ 572.648.000 ສຽງ ເທົ່າກັບ 100% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານ ເພື່ອຊາບ ແລະ ນຳໄປຈັດຕັ້ງປະຕິບັດ.

ຄວາມເຄົາລົບ ແລະ ນັບຖືເປັນຢ່າງສູງ

ປະທານກອງປະຊຸມ

ສີທາ ພົມມະຈິດ

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ຊັ້ນ 3, ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ, ສປປ ລາວ. Tel/Fax: (856-21) 265 394; E-mail: info@pcdlao.com; website: www.pcdlao.com